ກະຊວງວິທະຍາສາດແລະເຕັກໂນໂລຊີ
ສະບຽນຂາເຂົ້າ
ເລກທີ - 0810 ກວຕ
ລົງວັນທີ 30 APR 2014
ເວລາ.........................
ສົ່ງເຖິງ.........................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ນາຍົກລັດຖະມົນຕີ

ເລກທີ 152 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 28. 4. 2014

# ດຳລັດ
# ວ່າດ້ວຍການແຕ່ງຕັ້ງ
# ຄະນະສະພາບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 34/ສພຊ, ລົງວັນທີ 26 ກໍລະກົດ 2013;
- ອີງຕາມການສະເໜີຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 0240/ຮສສ, ລົງວັນທີ 5 ກຸມພາ 2014.

## ນາຍົກລັດຖະມົນຕີອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 01 : ຈຸດປະສົງ**

ດຳລັດສະບັບນີ້ ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບ ແລະ ແບບແຜນວິທີເຮັດວຽກ ຂອງຄະນະສະພາ ບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ກອງທຶນປະກັນສັງຄົມ ຢ່າງລວມສູນ, ໂປ່ງໃສ, ຍຸຕິທຳ, ວ່ອງໄວ ແລະ ຍືນຍົງ.

## ໝວດທີ II
## ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ02: ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະສະພາ ບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ເປັນອົງການຈັດຕັ້ງຂອງລັດຖະບານທີ່

ເຄື່ອນໄຫວບໍ່ປະຈໍາການ ທີ່ມີຊື່ຫຍໍ້ວ່າ : ( ກປຊ ) ມີພາລະບົດບາດໃນການຄຸ້ມຄອງ ແລະ ນໍາໃຊ້ກອງທຶນປະກັນ ສັງຄົມຢ່າງລວມສູນ.

## ໝວດທີ III

## ໂຄງປະກອບການຈັດຕັ້ງ

### ມາດຕາ 03: ໂຄງປະກອບບຸກຄະລາກອນ

ຄະນະສະພາບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ປະກອບດ້ວຍບັນດາທ່ານດັ່ງນີ້ :

| | | |
|---|---|---|
| 1. | ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນປະທານ |
| 2. | ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ | ຮອງປະທານ |
| 3. | ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ | ຮອງປະທານ |
| 4. | ຮອງປະທານສູນກາງສະຫະພັນກໍາມະບານ | ຮອງປະທານ |
| 5. | ຮອງຫົວໜ້າກົມໃຫຍ່ການເມືອງ ກະຊວງປ້ອງກັນປະເທດ | ກໍາມະການ |
| 6. | ຮອງປະທານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ | ກໍາມະການ |
| 7. | ຫົວໜ້າກົມນະໂຍບາຍ ກະຊວງປ້ອງກັນຄວາມສະຫງົບ | ກໍາມະການ |
| 8. | ຫົວໜ້າກົມປະກັນສັງຄົມ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ກໍາມະການ |
| 9. | ຫົວໜ້າກົມງົບປະມານ ກະຊວງການເງິນ | ກໍາມະການ |
| 10. | ຫົວໜ້າກົມຄຸ້ມຄອງລັດຖະກອນ ກະຊວງພາຍໃນ | ກໍາມະບານ |
| 11. | ຫົວໜ້າກົມປິ່ນປົວ ກະຊວງສາທາລະນະສຸກ | ກໍາມະການ |
| 12. | ຫົວໜ້າກົມຈັດຕັ້ງ-ກໍ່ສ້າງພະນັກງານ ສູນກາງສະຫະພັນແມ່ຍິງລາວ | ກໍາມະການ |
| 13. | ຫົວໜ້າກົມປົກປ້ອງແຮງງານ ສູນກາງສະຫະພັນກໍາມະບານລາວ | ກໍາມະການ |
| 14. | ເລຂາທິການສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ | ກໍາມະການ |
| 15. | ຜູ້ຕາງໜ້າສະມາຄົມຜູ້ຜະລິດ ແລະ ປຸງແຕ່ງກະສິກໍາ | ກໍາມະການ |
| 16. | ຜູ້ຕາງໜ້າກຸ່ມອຸດສາຫະກໍາ ແລະ ຫັດຖະກໍາ | ກໍາມະການ |
| 17. | ຜູ້ຕາງໜ້າກຸ່ມບໍລິການ | ກໍາມະການ |
| 18. | ຜູ້ຕາງໜ້າຜູ້ອອກແຮງງານ ລັດວິສາຫະກິດ | ກໍາມະການ |
| 19. | ຜູ້ຕາງໜ້າຜູ້ອອກແຮງງານ ຈາກວິສາຫະກິດເອກະຊົນ | ກໍາມະການ |
| 20. | ຜູ້ຕາງໜ້າປະກອບອາຊີບສ່ວນບຸກຄົນ | ກໍາມະການ |
| 21. | ຜູ້ອໍານວຍການກອງທຶນປະກັນສັງຄົມແຫ່ງຊາດ | ກໍາມະການທັງເປັນເລຂາ |

## ໝວດທີ IV

## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 04: ວ່າດ້ວຍໜ້າທີ່

ຄະນະສະພາ ບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ເຄື່ອນໄຫວປະຕິບັດໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 62 ຂອງກົດໝາຍວ່າດ້ວຍການປະກັນສັງຄົມ ຊຶ່ງມີດັ່ງນີ້:

1. ຄົ້ນຄວ້າແລະ ຮັບຮອງກົດລະບຽບພາຍໃນແລະແຜນການເຄື່ອນໄຫວຂອງກອງທຶນປະກັນສັງຄົມແຫ່ງຊາດ;
2. ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາການເຄື່ອນໄຫວ ຂອງຄະນະອໍານວຍການກອງທຶນ;
3. ຄົ້ນຄວ້າ ແລະ ພິຈາລະນາ ກ່ຽວກັບແຫຼ່ງລາຍຮັບ ຂອງກອງທຶນປະກັນສັງຄົມແຫ່ງຊາດ;
4. ຄົ້ນຄວ້າ ແລະ ພິຈາລະນາການຈັດແບ່ງອັດຕາສ່ວນເງິນ ຂອງແຕ່ລະກອງທຶນອຸດໜູນໃຫ້ສອດຄ່ອງກັບຄວາມຕ້ອງການໃນແຕ່ລະໄລຍະຕາມການຕົກລົງຂອງລັດຖະບານ;
5. ຄົ້ນຄວ້າ ອັດຕາເງິນສົມທົບ ແລະ ລະດັບການອຸດໜູນປະກັນສັງຄົມ ເພື່ອສະເໜີອົງການຄຸ້ມຄອງວຽກງານປະກັນສັງຄົມພິຈາລະນາແລ້ວ ນໍາສະເໜີລັດຖະບານຕົກລົງ;
6. ຄົ້ນຄວ້າ ອອກບັດປະກັນສັງຄົມ ແລະ ສ້າງບັນຊີຜູ້ປະກັນຕົນ;
7. ຄົ້ນຄວ້າ ສ້າງແຜນງົບປະມານການອຸດໜູນປະກັນສັງຄົມ ແລະ ງົບປະມານບໍລິຫານເປັນເດືອນ, ສາມເດືອນ, ຫົກເດືອນ ແລະ ສົກປີ ເພື່ອສະເໜີອົງການຄຸ້ມຄອງວຽກງານປະກັນສັງຄົມ ພິຈາລະນາ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຄຸ້ມຄອງກອງທຶນປະກັນສັງຄົມ ຕາມການມອບໝາຍ;
9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງກອງທຶນປະກັນສັງຄົມແຫ່ງຊາດຕໍ່ອົງການຄຸ້ມຄອງວຽກງານປະກັນສັງຄົມ ແລະ ລັດຖະບານ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ຫຼື ຕາມການມອບໝາຍ.

ມາດຕາ 05 : **ຂອບເຂດສິດ**

ຄະນະສະພາບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ມີສິດດັ່ງນີ້:

1. ແຕ່ງຕັ້ງກອງເລຂາ ແລະ ຄະນະກໍາມະການຕ່າງໆ ທີ່ຈໍາເປັນເພື່ອຄົ້ນຄວ້າແຕ່ລະວຽກງານ ໃນການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວຂອງກອງທຶນປະກັນສັງຄົມແຫ່ງຊາດ;
2. ອອກຂໍ້ກໍານົດ, ຄໍາສັ່ງ, ຄໍາສັ່ງແນະນໍາ ແລະ ແຈ້ງການ ກ່ຽວກັບບັນຫາທີ່ພົວພັນເຖິງວຽກງານ ປະກັນສັງຄົມ;
3. ປະຕິບັດສິດອື່ນໆ ຕາມທີ່ລັດຖະບານ ໄດ້ມອບໝາຍໃຫ້ສະເພາະ ແລະ ຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ ແລະ ລະບຽບກົດໝາຍ.

## ໝວດທີ V
## ແບບແຜນວິທີເຮັດວຽກ

ມາດຕາ 06:ແບບແຜນວິທີເຮັດວຽກ

ຄະນະສະພາບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ເຄື່ອນໄຫວແບບບໍ່ປະຈໍາການຖືເອົາກອງປະຊຸມເປັນຮູບການເຄື່ອນໄຫວເປັນຕົ້ນຕໍ.

ກອງປະຊຸມສາມັນຂອງສະພາບໍລິຫານກອງທຶນປະກັນສັງຄົມແຫ່ງຊາດຈັດຂຶ້ນສາມເດືອນຕໍ່ຄັ້ງ ເພື່ອພິຈາລະນາ ແລະ ຕົກລົງບັນຫາສໍາຄັນຕ່າງໆ ຂອງກອງທຶນປະກັນສັງຄົມ .

ໃນກໍລະນີຈໍາເປັນ ແລະ ຮີບດ່ວນ ກໍສາມາດຈັດກອງປະຊຸມວິສາມັນ ໄດ້ຕາມການຮຽກໂຮມຂອງ